**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ
ຄະນະຮັບຜິດຊອບໂຄງການ
ກົມແຜນການ ແລະ ການຮ່ວມມືສາກົນ ເລກທີ..1096../ກຜຮ.1
ນະຄອນຫຼວງວຽງຈັນ, ວັນທີ 16-11-2023

# ແຈ້ງການ

**ເລື່ອງ: ການຮັບຮອງເອົາ ບໍລິສັດ ທີ່ຊະນະ ແລະ ບໍ່ຊະນະການປະມູນ**

- ອີງຕາມ ຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບໂຄງການຟື້ນຟູທາງດິນແດງເປັນທາງປູຢາງ 2 ຊັ້ນ ແຕ່ແຍກທາງ 13 ເໜືອເຊື່ອມເສັ້ນທາງຫາແຫຼ່ງທ່ອງທ່ຽວຖໍ້ານອນ(ທ່າເຮືອ) ບ້ານຫ້ວຍສະເທົ້ງາ, ເມືອງວັງວຽງ, ແຂວງວຽງຈັນ ສະບັບເລກທີ 930/ຖວທ, ລົງວັນທີ 05 ຕຸລາ 2023;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການຮັບຮອງເອົາ ບໍລິສັດ ວັນເດີຟູນສຳຫຼວດອອກແບບ ແລະ ກໍ່ສ້າງຄົບວົງຈອນຈຳກັດຜູ້ດຽວ ເປັນຜູ້ຮັບເໝົາຟື້ນຟູທາງດິນແດງເປັນທາງປູຢາງ 2 ຊັ້ນສະບັບເລກທີ 1144/ຖວທ, ລົງວັນທີ 16 ພະຈິກ 2023;
- ອີງຕາມ ບົດປະເມີນຜົນການປະມູນ ສະບັບເລກທີ 1885/ຫກ, ລົງວັນທີ 09 ພະຈິກ 2023.

ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວໃນນາມເຈົ້າຂອງໂຄງການ ຂໍແຈ້ງມາຍັງ ທ່ານ ເພື່ອຊາບກ່ຽວກັບຜົນຂອງການປະມູນ ***"ໂຄງການຟື້ນຟູທາງດິນແດງເປັນທາງປູຢາງ 2 ຊັ້ນແຕ່ແຍກທາງ 13 ເໜືອເຊື່ອມເສັ້ນທາງຫາແຫຼ່ງທ່ອງທ່ຽວຖໍ້ານອນ (ທ່າເຮືອ) ບ້ານຫ້ວຍສະເທົ້ງາ, ເມືອງວັງວຽງ, ແຂວງວຽງຈັນ"*** ເຊິ່ງການປະມູນແຂ່ງຂັນລາຄາຄັດເລືອກຜູ້ຮັບເໝົາໄດ້ເປີດຂຶ້ນໃນວັນທີ 31 ຕຸລາ 2023 ທີ່ຜ່ານມາຢູ່ທີ່ຫ້ອງປະຊຸມຊັ້ນ 02 ຂອງຕຶກກະຊວງ ຖວທ, ຖະໜົນເສດຖາທິລາດເລກທີ 01000, ຕູ້.ປນ.122 ບ້ານຊຽງຢືນ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນລາຍລະອຽດມີດັ່ງນີ້:

**ໂຄງການ: ຟື້ນຟູທາງດິນແດງເປັນທາງປູຢາງ 2 ຊັ້ນແຕ່ແຍກທາງ 13 ເໜືອເຊື່ອມເສັ້ນທາງຫາແຫຼ່ງທ່ອງທ່ຽວຖໍ້ານອນ (ທ່າເຮືອ) ບ້ານຫ້ວຍສະເທົ້ງາ, ເມືອງວັງວຽງ, ແຂວງວຽງຈັນ.**

**ຜູ້ຊະນະການປະມູນ**

| ລ/ດ | ຊື່ບໍລິສັດ/ຜູ້ປະມູນ | ລາຄາມື້ເປີດຊອງ | ລາຄາປະເມີນ | ຜົນການປະເມີນ |
|---|---|---|---|---|
| 1 | ບໍລິສັດ ວັນເດີຟູນສຳຫຼວດອອກແບບ ແລະ ກໍ່ສ້າງ ຄົບວົງຈອນ ຈຳກັດຜູ້ດຽວ | 6.001.920.633 | 6.001.920.633 | ຜ່ານ |

ຜູ້ປະມູນອື່ນໆ

| ລ/ດ | ຊື່ບໍລິສັດ/ຜູ້ປະມູນ | ລາຄາມື້ເປີດຊອງ | ລາຄາປະເມີນ | ຜົນການປະເມີນ | ເຫດຜົນທີ່ບໍ່ຊະນະ |
|---|---|---|---|---|---|
| 1 | ບໍລິສັດ ບີແອວພີກໍ່ສ້າງ ຂົວທາງ-ໄຟຟ້າ ຈຳກັດ ຜູ້ດຽວ | 6.049.464.596 | 6.049.464.596 | ບໍ່ຜ່ານ | - ເອກະສານປະມູນ ມີບໍ່ຄົບຖ້ວນ; - ລາຄາສູງກ່ອນບໍລິສັດທີ່ຊະນະ. |
| 2 | ບໍລິສັດ ຊານົນໄຊ ສຳຫຼວດອອກແບບ ແລະ ກໍ່ສ້າງຄົບວົງຈອນ ຈຳກັດຜູ້ດຽວ | 6.051.660.814 | 6.051.660.814 | ບໍ່ຜ່ານ | - ເອກະສານປະມູນ ມີບໍ່ຄົບຖ້ວນ; - ລາຄາສູງກ່ອນ ບໍລິສັດທີ່ຊະນະ. |

ຄະນະຮັບຜິດຊອບໂຄງການຟື້ນຟູທາງດິນແດງເປັນທາງປູຢາງ 2 ຊັ້ນ ແຕ່ແຍກທາງ 13 ເໜືອເຊື່ອມເສັ້ນທາງຫາແຫຼ່ງທ່ອງທ່ຽວຖ້ຳນອນ (ທ່າເຮືອ) ບ້ານຫ້ວຍສະເຫຼົ້າ, ເມືອງວັງວຽງ, ແຂວງວຽງຈັນ ຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຂໍຂອບໃຈມາຍັງບັນດາ ບໍລິສັດ ທີ່ໃຫ້ຄວາມສົນໃຈເຂົ້າຮ່ວມການປະມູນໃນຄັ້ງນີ້ ແລະ ຫວັງຢ່າງຍິ່ງວ່າການປະມູນຄັ້ງຕໍ່ໄປ ທ່ານ ຈະໃຫ້ຄວາມສົນໃຈເຂົ້າຮ່ວມອີກ. ສຳລັບຜູ້ຊະນະການປະມູນຕ້ອງໄດ້ເຂົ້າມາເຊັນສັນຍາພາຍໃນ 14 ວັນຕາມກຳນົດເວລາ.

ຖ້າວ່າ ທ່ານໃດ ຫຼື ບໍລິສັດໃດ ທີ່ເຂົ້າຮ່ວມປະມູນຄັ້ງນີ້ ມີຂໍ້ຂ້ອງໃຈ ຫຼື ຄິດວ່າບໍ່ໄດ້ຮັບຄວາມເປັນທຳຕໍ່ກັບຜົນການປະເມີນ ແລະ ການຕັດສິນຂ້າງເທິງນີ້ ສາມາດເຮັດໜັງສືເປັນທາງການຫາ ຄະນະຮັບຜິດຊອບໂຄງການຟື້ນຟູທາງດິນແດງເປັນທາງປູຢາງ 2 ຊັ້ນແຕ່ແຍກທາງ 13 ເໜືອເຊື່ອມເສັ້ນທາງຫາແຫຼ່ງທ່ອງທ່ຽວຖ້ຳນອນ (ທ່າເຮືອ) ບ້ານຫ້ວຍສະເຫຼົ້າ, ເມືອງວັງວຽງ, ແຂວງວຽງຈັນ ຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ( ກົມແຜນການ ແລະ ການຮ່ວມມືສາກົນ )ພາຍໃນ 14 ວັນ, ການຮ້ອງທຸກແມ່ນປະຕິບັດຕາມຂັ້ນຕອນທີ່ກຳນົດໄວ້ໃນຄຳແນະນຳການປະຕິບັດກົດໝາຍຈັດຊື້-ຈັດຈ້າງ, ຖ້າການຮ້ອງທຸກກາຍເວລາທີ່ກຳນົດໄວ້ຖືວ່າບໍ່ມີຜົນ ຫຼື ບໍ່ໄດ້ຮັບການພິຈາລະນາ.

ໜັງສືຮ້ອງຮຽນສາມາດ ສົ່ງຫາຄະນະຮັບຜິດຊອບໂຄງການຟື້ນຟູທາງດິນແດງເປັນທາງປູຢາງ 2 ຊັ້ນແຕ່ແຍກທາງ 13 ເໜືອເຊື່ອມເສັ້ນທາງຫາແຫຼ່ງທ່ອງທ່ຽວຖ້ຳນອນ (ທ່າເຮືອ) ບ້ານຫ້ວຍສະເຫຼົ້າ, ເມືອງວັງວຽງ, ແຂວງວຽງຈັນ ຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ:

- **ກົມແຜນການ ແລະ ການຮ່ວມມືສາກົນ**

1. ທ່ານ ສຸກສະຫວັນ ສຸລິວົງ ຮອງຫົວໜ້າກົມແຜນການ ແລະ ການຮ່ວມມືສາກົນ;
   ເບີໂທລະສັບ: 020 5483 3866.
2. ທ່ານ ນາງ ຄຳບາງ ສຸລິມາບຸນເລີດ ຮອງຫົວໜ້າພະແນກແຜນການ ແລະ ການລົງທຶນ
   ເບີໂທລະສັບ: 021 212898, 020 2223 9394.

ດັ່ງນັ້ນ, ຈຶ່ງຂໍແຈ້ງມາຍັງທ່ານ ຜູ້ອຳນວຍການ ບໍລິສັດ ເພື່ອຮັບຊາບ ແລະ ປະຕິບັດຕາມແຈ້ງການສະບັບນີ້ດ້ວຍ.

**ເຊັນແທນຫົວໜ້າຄະນະຮັບຜິດຊອບໂຄງການ**
**(ຫົວໜ້າກົມ)**

ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ກົມແຜນການ ແລະ ການຮ່ວມມືສາກົນ

ແພງຈັນ ແພງເມືອງ